<u>ສິ່ງທີ່ໜ້າສົນໃຈ</u>

- *ຄຳທັກທາຍຈາກປະທານສະມາຄົມຄົນໃໝ່*
- *ລາຍງານຜົນການເລືອກຕັ້ງ*
- *JAOLメンバーの豚腕（トンワン）さんの地方の住民生活に起きた実際の問題をご紹介「水牛の受難」*
- *ຂໍ້ຄວາມ ຈາກທ່ານ Mori Senya ຜູ້ຕາງໜ້າຫ້ອງການ JICAປະຈຳລາວ*

# ຈົດໝາຍເຫດ ຂອງສະມາຄົມອະດີດນັກສຶກສາລາວ ຈາກຍີ່ປຸ່ນ

ສະມາຄົມອະດີດນັກສຶກສາລາວ ຈາກຍີ່ປຸ່ນ
ラオス元日本留学生会
Japan Alumni Of Lao

Volume 3, ມີນາ 2007

## ຄຳທັກທາຍຈາກປະທານສະມາຄົມ ຄົນໃໝ່

*ສະບາຍດີ ສະມາຊິກ ສະມາຄົມ ອະດີດນັກສຶກສາຈາກຍີ່ປຸ່ນທຸກໆທ່ານ...*

ກ່ອນອື່ນ,ຂໍສະແດງຄວາມຂອບໃຈເປັນຢ່າງສູງຕໍ່ຄະນະພັວພັນຕ່າງປະເທດສູນກາງພັກ ແລະ ສະມາຄົມມິດຕະພາບລາວ-ຍີ່ປຸ່ນສູນກາງທີ່ໄດ້ໃຫ້ໂອກາດໃນການສ້າງຕັ້ງສະມາຄົມ ແລະສະຖານເອກອັກຄະລັດຊະທູດຍີ່ປຸ່ນປະຈຳລາວ,ທີ່ໄດ້ໃຫ້ການສະໜັບສະໜູນແລະຊ່ວຍເຫລືອສະມາຄົມຂອງພວກເຮົາຕະຫລອດມາ.

ຂ້າພະເຈົ້າຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງທ່ານດຣ.ພອນແກ້ວ ຈັນທະມາລີປະທານສະມາຄົມຊຸດທີ1ແລະ ທ່ານສີທັດຖະລາຊະພົນຮອງປະທານພ້ອມທັງອະດີດຄະນະສະມາຄົມຊຸດທີ1, ຊຶ່ງເປັນຜູ້ບຸກເບີກແລະສ້າງສະມາຄົມອະດີດນັກສຶກສາລາວຈາກຍີ່ປຸ່ນແລະເອົາໃຈໃສ່ຕໍ່ວຽກງານການເຄື່ອນໄຫວຂອງສະມາຄົມພວກເຮົາຕະຫລອດມາ.

ຂ້າພະເຈົ້າ,ໃນນາມປະທານສະມາຄົມຊຸດໃໝ່ ແລະ ຕາງໜ້າໃຫ້ຄະນະທັງ 7 ທ່ານ,ຮູ້ສຶກເປັນກຽດ



ນາຍທີ່ລະນຶກໃນກອງປະຊຸມເລືອກຕັ້ງຄະນະບໍລິຫານສະມາຄົມຊຸດທີ2

ແລະ ພາກພູມໃຈເປັນຢ່າງຍິ່ງທີ່ໄດ້ຮັບຄວາມໄວ້ວາງໃຈຈາກຄະນະ ຊຸດໃໝ່ແລະສະມາຊິກ 30 ກວ່າທ່ານທີ່ຄັດເລືອກຂ້າພະເຈົ້າເປັນປະທານສະມາຄົມຄົນໃໝ່.ແຕ່ເຖິງຢ່າງໃດກໍດີ, ຂ້າພະເຈົ້າ ຄິດວ່າການສືບຕໍ່ແລະຄົງຢູ່ຢ່າງມີຄວາມໝາຍຂອງສະມາຄົມຂອງພວກເຮົາຂຶ້ນກັບການມີສ່ວນຮ່ວມ ແລະ ຄວາມສາມັກຄີ ຂອງບັນດາສະມາຊິກທຸກທ່ານ,ພວກເຮົາຕ້ອງມີລະບົບການຈັດຕັ້ງທີ່ເຂັ້ມແຂງ, ມີການເຄື່ອນໄຫວຢ່າງເປັນຂະບວນການຄືທີ່ເວົ້າມານັ້ນ ພວກເຮົາຕ້ອງຮ່ວມແຮງຮ່ວມໃຈກັນລົງມືຈັດຕັ້ງປະຕິບັດ.

ດັ່ງນັ້ນ,ຂ້າພະເຈົ້າຈຶ່ງຂໍເຊີນຊວນບັນດາສະມາຊິກທຸກທ່ານຈົ່ງໄດ້ເປັນແຮງໃຈ ແລະ ປະກອບສ່ວນເຂົ້າໃນການເຄື່ອນໄຫວກິດຈະກຳຕ່າງໆ. ເພື່ອສ້າງຄວາມສາມັກຄີຮັກແພງພາຍໃນສະມາຊິກ,ສ້າງຜົນປະໂຫຍດຕໍ່ສັງຄົມລາວ,ແລະກ້າວໄປເຖິງການເສີມສ້າງສາຍສຳພັນອັນດີລະຫວ່າງລາວ-ຍີ່ປຸ່ນໃຫ້ເຂັ້ມແຂງເປັນກ້າວໆໄປ.

ຂໍຂອບໃຈ.

ປະທານສະມາຄົມອະດີດນັກສຶກສາລາວຈາກຍີ່ປຸ່ນ

ປາລິນາ ເພັດສີລີແສງ

<u>ດ້ານໃນ</u>

*ລາຍງານຜົນການເລືອກຕັ້ງ* 2

*ບົດລາຍງານກິດຈະກຳຂອງJAOL* 3

*「水牛の受難」* 4

*ຂໍ້ຄວາມຈາກ ທ່ານ Mori Senya ຜູ້ຕາງໜ້າຫ້ອງການ JICAປະຈຳລາວ* 5

## ກ່ຽວກັບສາມາຄົມອະດີດນັກສຶກສາລາວຈາກຍີ່ປຸ່ນ(ສອລຍ)

ສະມາຄົມອະດີດນັກສຶກສາຈາກຍີ່ປຸ່ນໄດ້ຮັບອະນຸຍາດໃຫ້ສ້າງຕັ້ງຂຶ້ນຢ່າງເປັນທາງການຈາກລັດຖະບານຕາມມະຕິຕົກລົງຂອງສະມາຄົມມິດຕະພາບລາວ-ຍີ່ປຸ່ນສູນກາງສະບັບເລກທີ: 26/ສ.ມ.ລ-ຍ, ລົງວັນທີ 30 ພຶດສະພາ ປີ2003.ພາຍໃຕ້ການເປັນປະທານຂອງ ທ່ານ ດຣ.ພອນແກ້ວ ຈັນທະມາລີ ແລະ ໄດ້ເຄື່ອນໄຫວພາຍໃຕ້ກົດລະບຽບລວມຂອງສະມາຄົມ,ສະບັບເລກທີ: 21/ສອລຍ ລົງວັນທີ5/2/2001.ສະມາຄົມອະດີດນັກສຶກສາລາວຈາກຍີ່ປຸ່ນມີຊື່ຫຍໍ້ເປັນອັກສອນລາວວ່າ: **ສອລຍ** ແລະ ຊື່ຫຍໍ້ເປັນອັກສອນພາສາອັງກິດວ່າ: JAOL(ຈາໂອນ), ເຊິ່ງຫຍໍ້ມາຈາກພາສາອັງກິດວ່າ: Japan Alumni Of Laos. ມາຮອດປະຈຸບັນມີອາຍຸໄດ້ 3 ປີກວ່າແລ້ວ, ແຕ່ເຫັນວ່າການເຄື່ອນໄຫວຂອງສະມາຄົມພວກເຮົາຍັງບໍ່ທັນເຮັດໄດ້ຢ່າງຟົດຟື້ນເທົ່າທີ່ຄວນຍ້ອນວ່າຈຳນວນສະມາຊິກຂອງພວກເຮົາຍັງມີໜ້ອຍບໍ່ມີເວລາຫຼາຍພໍໃນການເຄື່ອນໄຫວແລະເຂົ້າຮ່ວມກິດຈະກຳ,ພ້ອມນັ້ນກໍ່ຍັງມີຄວາມຫຍຸ້ງຍາກຈາກປັດໃຈພາຍໃນແລະພາຍນອກຫລາຍປະການ.ແຕ່ເຖິງຢ່າງໃດກໍດີ,ສະມາຄົມຈະຄົງຕົວຢູ່ໄດ້ຕ້ອງສ້າງໃຫ້ການຈັດຕັ້ງມີຄວາມເຂັ້ມເຂັ້ມແຂງແລະມີການເຄື່ອນໄຫວທີ່ດີຂຶ້ນເລື້ອຍໆ,ເປົ້າໝາຍທີ່ສຳຄັນອີກຢ່າງໜຶ່ງກໍ່ຄືການປະກອບສ່ວນຢ່າງຫ້າວຫັນເຂົ້າໃນວຽກງານສ້າງສາແລະພັດທະນາປະເທດເຮົາ.

# ລາຍງານຜົນການເລືອກຕັ້ງ



ປະທານກ່າວເປີດກອງປະຊຸມ

ໃນວັນທີ11/06/2006, ທີ່ສູນຮ່ວມມືພັດທະນາຊັບພະຍາກອນມະນຸດ ລາວ - ຍີ່ປຸ່ນ( LJ Center), ມະຫາວິທະຍາໄລແຫ່ງຊາດ. ສະມາຄົມອະດີດນັກສຶກສາລາວຈາກຍີ່ປຸ່ນໄດ້ຈັດກອງປະຊຸມເລືອກຕັ້ງຄະນະບໍລິຫານຊຸດໃໝ່ຂຶ້ນໂດຍມີລາຍລະອຽດດັ່ງຕໍ່ໄປນີ້.

ຈຸດປະສົງ

(1).ລາຍງານການເຄື່ອນໄຫວ ແລະ ລະພາຍການຂອງສະມາຄົມໃນໄລຍະຜ່ານມາ

(2).ແລກປ່ຽນຄວາມຄິດ ເຫັນວຽກງານສະເພາະໜ້າແລະຮັບສະໝັກສະມາຊິກໃໝ່.

(3).ປັບປຸງຈັດການເລືອກຕັ້ງຄະນະສະ ມາຄົມຊຸດໃໝ່(ຊຸດທີ2).

(4).ພົບປະສັງສັນກັບ ບັນດາສະມາຊິກຂອງສະມາຄົມ ແລະຄົນຍີ່ປຸ່ນ.

ແຂກທີ່ຖືກເຊີນຮ່ວມກອງປະຊຸມ

1.Ms. Akamine Ayako ເລຂາສອງ, ຈາກສະຖານທູດຍີ່ປຸ່ນປະຈຳລາວ

2.Ms. Futamoto Yuko ເລຂາສອງ, ຈາກສະຖານທູດຍີ່ປຸ່ນປະຈຳລາວ

3. Ms. Sakaue ຜູ້ຕາງໜ້າຫ້ອງການ JICE

4. Mr. Masamoto ຜູ້ຕາງໜ້າຫ້ອງການ JICE

5. ທ່ານ ທິບພະລັກ ສຸກສະຫວັນ ຄະນະພົວພັນຕ່າງປະເທດສູນກາງພັກ

6. ທ່ານ ບົວຄຳ ສີສຸລາດ ຫົວໜ້າເຂດເສດຖະກິດພິເສດສະຫວັນ - ເຊໂນ

ຄະນະກຳມະການ ການເລືອກຕັ້ງ

ຄະນະກຳມະການ ການເລືອກຕັ້ງ ປະກອບມີ 2 ທ່ານ:

1. ທ່ານ ຈັນຊະນະ ສີຈັນທອງທິບ
2. ທ່ານ ທອງວັນ ເທບໄກສອນ

---

*"ກອງປະຊຸມເທື່ອນີ້ແມ່ນໄດ້ຮັບກຽດອັນສູງສົ່ງຈາກ ສະຖານທູດຍີ່ປຸ່ນປະຈຳລາວ, ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ກໍ່ໄດ້ໃຫ້ກຽດເຂົ້າຮ່ວມ"*

ຈຳນວນຜູ້ສະໝັກລົງເລືອກຕັ້ງ

ຈຳນວນຜູ້ສະໝັກເລືອກຕັ້ງທັງໝົດ 14 ທ່ານ, ເລືອກເອົາ 7 ທ່ານ ຕາມຄະແນນສຽງສູງຫາຕ່ຳ.

1. ທ່ານ ສິທັດຖະ ລາຊະພັນ
2. ທ່ານ ວັນນະດາ ພົມມະສະຖິດ
3. ທ່ານ ໄພໄຊສະຫວັນ
4. ທ່ານ ນ. ນາງປະລິນາ ເພັດສີລີແສງ
5. ທ່ານ ນ. ບົວສອນ ວົງຖາວອນ
6. ທ່ານ ລັດສະດາກອນ
7. ທ່ານ ຈັນຊະນະ ສີຈັນທອງທິບ
8. ທ່ານ ທອງວັນ ເທບໄກສອນ
9. ທ່ານ ພຸດທາ ເພັດໄບສີ
10. ທ່ານ ດຣ.ບຸນລ້ອນ ດ້ວງເງິນ
11. ທ່ານ ສົມມະໂນ ຄຳມະນີວົງ
12. ທ່ານ ບົວຄຳ ສີສຸລາດ
13. ທ່ານ ນ. ຈັນສະໄໝ ສຸວັນລາສີ
14. ທ່ານ ປັນຍາ ຈັນທະວົງ

ຈຳນວນຜູ້ມີສິດລົງຄະແນນ

ຈຳນວນຜູ້ມີສິດລົງຄະແນນເລືອກຕັ້ງທັງໝົດ 29 ທ່ານ.

ຜົນການເລືອກຕັ້ງ

ຜ່ານການປ່ອນບັດລົງຄະແນນເລືອກຕັ້ງ, ຜູ້ທີ່ໄດ້ຮັບການເລືອກຕັ້ງມີລາຍຊື່ດັ່ງຕໍ່ໄປນີ້

1. ທ່ານ ນ. ປາລີນາ ເພັດສີລີແສງ
2. ທ່ານ ຈັນຊະນະ ສີຈັນທອງທິບ
3. ທ່ານ ປັນຍາ ຈັນທະວົງ
4. ທ່ານ ນ. ບົວສອນ ວົງຖາວອນ
5. ທ່ານ ສິທັດຖະ ລາຊະພັນ
6. ທ່ານ ລັດສະດາກອນ ສຸດາ
7. ທ່ານ ດຣ.ບຸນລ້ອນ ດວງເງິນ

---



ບັນຍາກາດຂອງກອງປະຊຸມ

ອີງຕາມຜົນຂອງການເລືອກຕັ້ງຊຸດທີ 2 ນີ້, ສະມາຄົມໄດ້ ຈັດຕັ້ງຄະນະບໍລິຫານງານຊຸດໃໝ່ຂຶ້ນ ໂດຍມີລາຍລະອຽດດັ່ງຕໍ່ໄປນີ້

ປະທານ

ທ່ານ ນ. ປະລີນາ ເພັດສີລີແສງ

ຮອງປະທານ ຜູ້ທີ1

ທ່ານ ດຣ. ບຸນລ້ອນ ດ້ວງເງິນ

ຮອງປະທານ ຜູ້ທີ2

ທ່ານ ປັນຍາ ຈັນທະວົງ

ເລຂານຸການ ແລະ ບັນຊີ

ທ່ານ ນ. ບົວສອນ ວົງຖາວອນ

ຄະນະກຳມະການ

ທ່ານ ສິທັດຖະ ລາຊະພັນ

ທ່ານ ຈັນຊະນະ ສີຈັນທອງທິບ

ທ່ານ ລັດສະດາກອນ ສຸດາຈັນ

ທີ່ປຶກສາກິດຕິມະສັກ

– ທ່ານ ດຣ. ພູແກ້ວ ອັກຄະນິນດີ, ສະມາຊິກສະພາແຫ່ງຊາດ

– ທ່ານ ບົວຄຳ ສີສຸລາດ,ຜູ້ອຳນວຍການເຂດເສດຖະກິດພິເສດສະຫວັນເຊໂນ

– ທ່ານ ດຣ ພອນແກ້ວ ຈັນທະມາລີ ,ຮອງພະແນກແຜນການ-ການເງິນ ຫ້ອງການມະຫາວິທະຍາໄລແຫ່ງຊາດ

– ທ່ານ ວັນທອງ ຍອຍສາຍຄຳ,ອາຈານສອນພາສາຍີ່ປຸ່ນມະຫາວິທະຍາໄລແຫ່ງຊາດ

– ທ່ານ ຄຳມ່ວນ ຊົມສີທາປັນຍາ, ຮອງອຳນວຍການ ບໍລິສັດ ETL

– ທ່ານ ທຸມແພງ ເນກຄະສິນ

Volume 3, ມີນາ 2007

# ບົດລາຍງານກິດຈະກຳຜ່ານມາຂອງ JAOL ແລະ ແຜນກິດຈະກຳໃນຕໍ່ໜ້າ

ໃນວັນທີ11 ເດືອນ 6 ປີ 2006ຜ່ານມາຄະນະສະມາຄົມອະດີດນັກສຶກສາລາວຈາກຍີ່ປຸ່ນ ໄດ້ຈັດກອງປະຊຸມປະຈຳປີຂື້ນ ເພື່ອສະຫລຸບການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ແລະ ໄດ້ດຳເນີນການເລືອກຕັ້ງເອົາຄະນະສະມາຄົມຊຸດໃໝ່. ພາຍຫລັງທີ່ໄດ້ຮັບການແຕ່ງຕັ້ງຄະນະສະມາຄົມໄດ້ເນັ້ນໃສ່ການສ້າງຄວາມເຂັ້ມແຂງພາຍໃນສະມາຄົມ,ພ້ອມນັ້ນໄດ້ສ້າງໂຄງສ້າງການເຮັດວຽກ. ໂດຍມີການແບ່ງໜ້າທີ່ວຽກງານ ແລະຄວາມຮັບຜິດຊອບໃຫ້ແກ່ຄະນະສະມາຄົມເພື່ອຊີ້ນຳວຽກ ງານໃນແຕ່ລະດ້ານໃຫ້ຊັດເຈນ. ສຳລັບຜົນການເຮັດວຽກຂອງຄະນະສະມາຄົມຊຸດໃໝ່ໃນໄລຍະ 8 ເດືອນທີ່ຜ່ານມານັ້ນເຫັນວ່າມີການເຄື່ອນໄຫວກິດຈະກຳດັ່ງລຸ່ມນີ້:

- ປະຊຸມສາມັນ ແລະ ວິສາມັນພາຍໃນຄະນະບໍລິຫານສະມາຄົມ
- ການແຂ່ງຂັນໃບລື້ງສັງສັນລະຫວ່າງສະມາຊິກຂອງສະມາຄົມ
- ເຂົ້າຮ່ວມກິດຈະກຳຂອງສະມາຄົມຄົນຍີ່ປຸ່ນ ຢູ່ລາວ ເຊັ່ນ: ງານແຂ່ງຂັນໃບລື້ງ, ການແຂ່ງຂັນກິລາມິດຕະພາບ(undokai)
- ແປລະຄອນຍີ່ປຸ່ນເພື່ອອອກສາຍໃນໂທລະພາບລາວແຫ່ງຊາດໃນທ້າຍເດືອນ3/2007
- ແຂ່ງຂັນເຕະບານພາຍໃນສະມາຊິກສະມາ ຄົມ
- ຈັດສຳມະນາທີ່ມີຫົວຂໍ້ກ່ຽວກັບວັດທະນະທຳ ແລະ ສັງຄົມທີ່ສູນລາວ - ຍີ່ປຸ່ນ
- ມີສ່ວນຮ່ວມໃນການຈັດແຂ່ງຂັນເວົ້າພາສາຍີ່ປຸ່ນ ຄັ້ງທີ 4, ເຊິ່ງເປັນການເຂົ້າຮ່ວມປີທີ3ຂອງສະມາຄົມ
- ນຳສະເໜີວິທີການສອບເສັງຊີງທຶນການສຶກສາຂອງລັດຖະບານຍີ່ປຸ່ນໃຫ້ແກ່ຜູ້ທີ່ກະກຽມສອບເສັງ
- ນຳສະເໜີປະສົບການດຳລົງຊີວິດຢູ່ຍີ່ປຸ່ນໃຫ້ກັບນັກສຶກສາທີ່ກະກຽມຈະໄປສຶກສາຢູ່ປະ ເທດຍີ່ປຸ່ນ
- ນຳສະເໜີຂັ້ນເທິງ ເພື່ອອະນຸຍາດໃຫ້ເຂົ້າຮ່ວມ ASCOJA,ເຊິ່ງກຳລັງຢູ່ໃນໄລຍະລໍຖ້າການພິຈາລະນາຂອງຄະນະພົວພັນຕ່າງປະເທດສູນກາງພັກ
- ເຂົ້າ ຮ່ວມລາຍການ " ຮ່ວມຕົວກັນໃໝ່ = ReUnion" ຈັດຂຶ້ນໂດຍກະຊວງການຕ່າງປະເທດຍີ່ປຸ່ນ,ໂດຍການຄັດເລືອກສະມາຊິກຜູ້ທີ່ທ່າວທັນ ແລະ ມີສ່ວນຮ່ວມໃນກິດຈະກຳຕ່າງໆຂອງ JAOL
- ເຂົ້າຮ່ວມແປພາສາໃຫ້ແກ່ກິດຈະກຳຕ່າງໆຂອງ ສູນລາວ - ຍີ່ປຸ່ນ (Takebana, shado,shodo,ເຮັດອາຫານຍີ່ປຸ່ນ)
- ແລກປ່ຽນເຕັກນິກ ແລະ ວິທີການແປພາສາທີ່ບ້ານທ່ານ Aoki, ພະນັກງານສະຖານທູດຍີ່ປຸ່ນ ເຖິງແມ່ນວ່າກິດຈະກຳຕ່າງໆ ທີ່ໄດ້ກ່າວມາຂ້າງເທິງນັ້ນຈະມີຫລາຍກໍ່ຕາມ ແຕ່ທາງຄະນະສະມາຄົມຍັງສັງເກດ ເຫັນວ່າສ່ວນຫລາຍຍັງເປັນກິດຈະກຳທີ່ມີຢູ່ໃນວົງແຄບ ແລະ ສະມາຊິກທຸກຄົນບໍ່ສາໄດ້ເຂົ້າຮ່ວມຢ່າງທົ່ວເຖິງ.ສາຍເຫດອາດເປັນເພາະກິດຈະກຳຕ່າງໆທີ່ໄດ້ເຮັດນັ້ນຍັງບໍ່ທັນຕອບສະໜອງໄດ້ຕາມຄວາມ ຕ້ອງການສ່ວນຫລາຍຂອງສະມາຊິກ, ການກະຈາຍຂໍ້ມູນຂ່າວສານຍັງບໍ່ທັນທົ່ວເຖິງ ແລະອື່ນໆດັ່ງນັ້ນ,ແຜນກິດຈະກຳຂອງປີນີ້ຈິ່ງຂໍໃຫ້ສະມາຊິກທຸກຄົນມີສ່ວນຮ່ວມປະກອບຄວາມຄິດເຫັນເພື່ອໃຫ້ສະມາຄົມໄດ້ມີກິດຈະກຳທີ່ຫລາກຫລາຍໂດຍກິດຈະກຳຕ່າງໆທີ່ຈະເຮັດນັ້ນຕ້ອງໄດ້ເນັ້ນໃສ່ສາມເປົ້າໝາຍຫລັກທີ່ຄະນະໄດ້ວາງໄວ້ຄື:

1) ກິດຈະກຳເພື່ອສ້າງຄວາມສາມັກຄີພາຍໃນສະມາຊິກ

2) ກິດຈະກຳເພື່ອຜົນປະໂຫຍດໃຫ້ແກ່ສັງຄົມລາວ

3) ກິດຈະກຳເພື່ອເສີມສ້າງຄວາມມິດຕະພາບລະຫວ່າງ ລາວ - ຍີ່ປຸ່ນ



ການແຂ່ງຂັນກິລາມິດຕະພາບ



ການແຂ່ງຂັນກິລາມິດຕະພາບ

# 水牛の受難―ルーの村のゴム園開発がもたらすもの―トンワン



*"JAOLメンバーのトンワンさんの研究成果「水牛の受難」をご紹介します。本文では地方の住民生活に起きた実際の問題が伺います"*

北部の少数民族社会に今、大きな変化が起きつつある。中国からの資本、人、物の大規模な流入である。それは、国家間の力関係を反映したように映る。道路工事のような大規模なインフラ整備は、中国の協力なしでは実現しない。米をはじめとする多様な農作物が中国から持ち込まれ、反対に、ラオス側のそれは中国に買い取られていく。こうした状況が人びとの暮らしにどのように接合されるのかを、タイ・ルー社会を事例に考えてみた。

### 文化村

ルアン・パバーン県ナム・バック郡中心部から約八km離れた山間に位置するナーニャン・タイ(Nayang Tai)では、九十九世帯四百六十七人のルー(Lue)が暮らす。竹を多用した高床住居、宗教、織物、農耕などに伝統的なたたずまいを残すこの村は、文化保存・保護の観点から、二〇〇二年に県の文化事務所により「文化村」に指定された。

### 水田と水牛

村では水田稲作が生業の中心になる。水田の総面積はおよそ九十三ha、雨期の一毛作である。古くから小規模な灌漑があり、灌漑水を利用できる水田ナー・ナム・ムアンが約七十%、天水のみの水田ナー・ナム・ファーが約三十%である。水田には世帯ごとに柵が設けてあり、田植えが終わった後に水牛を放し飼いするならわしだった。

水牛は、家と水田の次に大切な財産とされてきた。雌は子供を産み増やすからもちろんだが、雄も四、五歳まで育てれば一頭六百ドルほどで売れる。世帯の重要な収入源となる。

### ゴム園の開発と罰金の波紋

周辺の山地では、二〇〇五年から、中国の業者によるゴム栽培が始まった。ケシ栽培の根絶や焼畑の撲滅、貧困の緩和といった郡、ひいては国家の戦略にのっとったもので、二〇〇六年は一八〇〇haのゴムが栽培された。二〇〇七年は三千ha、そして将来は総面積七千haまで拡大される。

村では、ゴム園に侵入した水牛の飼い主に罰金を課す規則がつくられた。植えてからの年月によって罰金の額は変わる。もし自分の飼育する水牛が他人のゴム園に入り、苗木をだめにすれば、「罰金同意書」なるものが即座に作成される。それにサインをした日から十五日以内に、課された金額を支払わなければならない。この規則により、二〇〇六年には五世帯が罰金を払った。

この規則が発効された後に、多くの村人が水牛を手放した。二〇〇五年には三百十八頭（雌百八十三頭）の水牛が飼育されていたが、二〇〇六年だけで二百三十二頭（雌百二十九頭）の水牛が売られた。残りは八十六頭（雌五十四頭）である。残った水牛は、ゴム園がまだ広がっていない場所で注意深く飼育されている。かつてのような水牛の放し飼いが不可能になり、飼い主は水牛に同行してその動きに目を光らせるようになった。現在、いくぶん皮肉を込めて「携帯水牛(khwaai mww tuu)」と呼ばれる所である。



### 水牛の減少がもたらしたもの

ナー・ナム・ファーでは雨期のはじめに九種類の雑草が繁茂するが、水牛がいなくなり、田起し前の除草作業は村人にのしかかるようになった。

田起しのために農業トラクターを購入する世帯が続出した。村のトタクター台数は二〇〇五年の十一台から二〇〇六年には三十台（二十一台は中国製）まで増えた。トラクターにはガソリン代がかかる。二〇〇六年、村全体でおよそ二〇〇〇ℓのガソリンを使った。加えて中国製のトラクターはよく故障する。毎年、修理代もかかる。かくして、トラクターを所有しながら、人に雇われ仕事をするという奇妙な現象も起きている。さらに、トラクターで田起しをするようになったら、水田のウナギやカニが減ったという。

二〇〇六年は雨量が少なかった反面、灌漑水を溜めるために川に設けられた堰も何回も壊れた。米の収穫量は減少しそうである。従来なら、米が足りなくても水牛を売ることでしのげたのだが、これからは事情が違う。生活の不安が増している。村人の多くは、根本的な解決策として、ゴム園への柵の設置を要求している。

### 将来の不安

ゴム園が開発され、水牛が

減った。この単純な図式の中に、かつてこの村が経験し得なかったさまざまな現象が隠れている。たとえば、トラクターを共同購入した村人のあいだでは、修理費の出費配分をめぐる紛争が起きた。人間関係や社会関係も変化する可能性がある。ゴムの木からゴム液を採取するまでに七、八年を要する。そのあいだの収入はどうなるのか。水牛を売った世帯は現金収入が減少するだろう。ましてや、将来のゴムの買い取り価格は現状では明らかではない。高値で取引される保証もない。教育費や病気治療費などの出費にどう対応するかは大きな問題である。

この開発自体にそもそも巧妙な仕掛けが隠されている。中国の業者がゴム液を買い取るとき、三十%は苗木代として引かれる。さらに三%は郡役所に引かれ、二%は村にプールされる。当人への支払いは六十五%である。また、現在のゴム園一八〇〇㌶のうち、村人の所有分は五十四㌶（三%）しかない。将来、結局は中国の業者に雇用され、ゴム液の採取に従事する労働者にならないか。ゴム園の開発は貧困を撲滅するためとされたが、実際にそうなるかどうか見守る必要があろう。

## *ຄວາມຄາດຫວັງທີ່ມີຕໍ່JAOL ແມ່ນການ"ເປັນອົງການຈັດຕັ້ງ"*

*"ຂໍ້ຄວາມ ຈາກທ່ານ Mori Senya ຜູ້ຕາງໜ້າຫ້ອງການ JICAປະຈຳລາວ"*

ສິ່ງທີ່JAOLໄດ້ຍົກຂຶ້ນ 3ເປົ້າໝາຍຫລັກ ອັນໃດ ກໍ່ມີຄວາມໝາຍສຳຄັນຍິ່ງ, ຈົ່ງໃດກໍ່ຂໍໃຫ້ ທັງໝົດສາມາດປະກົດຜົນເປັນຈິງ, ແຕ່ວ່າ, ສິ່ງເຫລົ່ານັ້ນ ຈະສາມາດປະກົດຜົນເປັນຈິງໄດ້ແນວໃດນັ້ນ. ກ່ຽວກັບຈຸດນີ້, ຄິດວ່າເປັນບັນຫາທີ່ສະມາຊິກJAOL ທຸກຄົນຕ້ອງ ໄດ້ຄົ້ນຄິດນຳກັນຢູ່ສະເໝີ. ຫລັງຈາກທີ່ໄດ້ພິຈາລະນາບັນຫາເພື່ອໃຫ້3ເປົ້າໝາຍດັ່ງກ່າວ ປະກົດຜົນເປັນຈິງນັ້ນ, ຂ້າພະເຈົ້າເຊື່ອແນ່ວ່າ ສິ່ງທີ່ສຳຄັນທີ່ສຸດແມ່ນການທີ່JAOL "ເປັນອົງການຈັດຕັ້ງ". ໃນປັດຈຸບັນ, ສິ່ງທີ່JAOLເປັນ,ແມ່ນເປັນພຽງການເຕົ້າໂຮມກັນຂອງ "ບຸກຄົນ" ທີ່ເປັນອາດີດນັກສຶກສາ ເທົ່ານັ້ນ. ຖ້າເປັນພຽງແຕ່ ການເຕົ້າໂຮມກັນຂອງ "ບຸກຄົນ" ແມ່ນບໍ່ສາມາດເອີ້ນວ່າ "ອົງການຈັດຕັ້ງ" ໄດ້. ສຳລັບ "ອົງການຈັດຕັ້ງ" ໃດໜຶ່ງ, ມັນຈຳເປັນຕ້ອງມີຂອບເຂດການເຄື່ອນໄຫວ ເຊິ່ງຈະເປັນການກຳນົດ "ບຸກຄົນ" ທີ່ເປັນອົງປະກອບຂອງ "ອົງການຈັດຕັ້ງ" ນັ້ນໆ. ອີກຢ່າງໜຶ່ງ, ຂອບເຂດການເຄື່ອນໄຫວດັ່ງກ່າວ, ຕ້ອງໄດ້ຖືກຮັບຮູ້ຈາກ "ບຸກຄົນ" ທັງ ໝົດທີ່ເປັນອົງ ປະກອບ, ຖ້າບໍ່ດັ່ງນັ້ນ ກໍ່ບໍ່ມີຄວາມ ໝາຍຫຍັງ. ເວົ້າເຂົ້າໃຈງ່າຍໆ, ຍົກຕົວຢ່າງ ສຳລັບ ພາລະບົດບາດ ຂອງຄະນະບໍລິຫານຂອງ JAOL ອາດມີການກຳນົດຈະແຈ້ງໃນລະດັບ ໃດໜຶ່ງ, ແຕ່ວ່າ, ພາລະບົດບາດ ຂອງສະມາຊິກຜູ້ອື່ນໆ ແມ່ນຫຍັງກັນແທ້. ຖ້າເປັນ "ອົງການຈັດຕັ້ງ" ແລ້ວ , ສິດແລະພັນທະຂອງສະມາຊິກແຕ່ລະຄົນແຕ່ລະຄົນທີ່ເປັນອົງປະກອບ ຈະຂາດບໍ່ໄດ້ເດັດຂາດ. ສິ່ງທີ່ຂ້າພະເຈົ້າ ສົນໃຈ, ອາດຈະບໍ່ແມ່ນ "ສິດ", ແຕ່ເປັນ "ພັນທະ" ຫລາຍກວ່າ."ອົງການຈັດຕັ້ງ" ຈະດຳລົງຢູ່ໄດ້ກໍ່ຕໍ່ເມື່ອ ພັນທະຂອງແຕ່ລະຄົນແຕ່ລະຄົນໄດ້ຮັບການປະຕິບັດສຳເລັດຜົນ. ເວົ້າກົງກັນຂ້າມ, ຖ້າວ່າແຕ່ລະຄົນທີ່ເປັນອົງປະກອບ ມີແຕ່ຮຽກຮ້ອງເຖິງ "ສິດ" ພຽງຢ່າງດຽວ, ແຕ່ບໍ່ປະຕິບັດ "ພັນທະ" ທີ່ຕົນເອງຕ້ອງໄດ້ສະສາງ, ກໍ່ໝາຍຄວາມວ່າ "ອົງການຈັດຕັ້ງ" ນັ້ນ ຈະພັງທະລາຍ.

ເພື່ອໃຫ້JAOLເປັນ "ອົງການຈັດຕັ້ງ", ບໍ່ແມ່ນພຽງແຕ່ ຄະນະບໍລິຫານເທົ່ານັ້ນ, ແຕ່ລວມໄປເຖິງສະມາຊິກທຸກໆຄົນຄວນຈະກ່ຽວພັນກັບJAOL ແບບໃດ, ກ່ຽວກັບ ບັນຫານີ້, ຢາກໃຫ້ທຸກໆຄົນ ສົນທະນາປຶກສາ ນຳກັນໃຫ້ຖີ່ຖ້ວນ.

ເມື່ອJAOLເປັນ "ອົງການຈັດຕັ້ງ" ແລະສາມາດດຳເນີນກິດຈະກຳຂອງຕົນເອງແລ້ວ, ໃນທາງຜົນໄດ້ຮັບ, JAOLກໍ່ຈະສາມາດຮັດແໜ້ນການຕິດຕໍ່ພົວພັນກັບສະມາຄົມຄົນຍີ່ປຸ່ນຢູ່ລາວ ກັບJICAໄດ້ ບໍ່ວ່າທາງດ້ານການແລກ ປ່ຽນ ຫລືທາງດ້ານວຽກງານໃນຖານະທີ່ເທົ່າທຽມກັນ, ນັ້ນແມ່ນສິ່ງທີ່ຂ້າພະເຈົ້າຢາກຝາກໄວ້. ທັງສະມາຄົມຄົນຍີ່ປຸ່ນ ແລະ ທັງ JICA, ລ້ວນແລ້ວແຕ່ເປັນ "ອົງການຈັດຕັ້ງ" ໜຶ່ງ. ສຳລັບJAOLກໍ່ເຊັ່ນດຽວກັນ ຢາກໃຫ້ກາຍເປັນ "ອົງການຈັດຕັ້ງ", ນີ້ແມ່ນຄວາມຄາດຫວັງຂອງຂ້າພະເຈົ້າທີ່ມີຕໍ່JAOL.



Mori Senya

−ປະທານສະມາຄົມຄົນຍີ່ປຸ່ນຢູ່ລາວ ສົກປີ2006

—ຜູ້ຕາງໜ້າຫ້ອງການJICA ປະຈຳລາວ

# ສະມາຄົມອາດີດນັກສຶກສາລາວ

"ໄມ້ລຳດຽວລ້ອມຮົ້ວບໍ່ໄຂວ່ ໄຜ່ບໍ່ພ້ອມແປງບ້ານບໍ່ເຮືອງ" ນັບວ່າເປັນຄຳສຸພາສິດທີ່ເປັນສັດຈະທຳຕະ ທອດໄປຄົນຮຸ່ນກ່ອນຝາກໄວ້ໃຫ້ພວກເຮົາລູກຫຼານ ເຫັນໄດ້ຄວາມສຳຄັນຂອງຄວາມໜຸ້ນທີ່ສາມັກຄີ. ພວກ ອ້າຍນ້ອງນັກສຶກສາລ້ວນແຕ່ເປັນຜູ້ທີ່ຮຽນເກັ່ງ ແລະມີໂອກາດໄດ້ໄປສຶກສາຕໍ່ທີ່ປະເທດຍີ່ປຸ່ນນັ້ນ ພວກເຮົາຄວນຈະເຮັດຈັ່ງໃດຈະດຶງເອົາຄວາມເກັ່ງຄວາມໂຊກ ພ້ອມທັງຄວາມຮູ້ທີ່ໄດ້ຮຽນມານັ້ນ ປະກອບສ່ວນເຂົ້າໃນການສ້າງສາບ້ານເມືອງເຮົາ. ສະມາຄົມກໍແມ່ນຮູບການຈັດຕັ້ງນຶ່ງ ທີ່ຈະເຮັດໃຫ້ ພວກເຮົາຂຸດຄົ້ນຄວາມສາມາດແລະທ່າແຮງບົ່ມຊ້ອນນັ້ນມາແລກປ່ຽນກັນ ແລະເຮັດໃຫ້ເປັນປະໂຫຍດແກ່ ສັງຄົມບ້ານເຮົາໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້. ໂອກາດຫຼືເງື່ອນໄຂທີ່ບຸກຄົນນຶ່ງຈະໄດ້ສະແດງອອກຊຶ່ງຄວາມສາມາດຂອງຕົນເອງນັ້ນອາດຈະມີໜ້ອຍເຕັມທີ່ ແຕ່ຖ້າມີຄວາມມຸ່ງມານະຢ່າງຕໍ່ເນື່ອງ ຮັກສາໄວ້ ຊຶ່ງຄວາມຖະໜອມທ່ອມຕົວແດ່ ເຊື່ອແນ່ວ່າເວລານັ້ນອາດຈະເປັນເວລາທີ່ຈະໄດ້ບິນແອ່ນຕ້າຍຂາວແຈ້ງ ດັ່ງນົກຍາງ. ແຕ່ວ່າ ຄຸນຄ່າຂອງຄົນເຮົາກໍບໍ່ແມ່ນແຕ່ໄດ້ຮັບການສຶກສາມາດີເທົ່ານັ້ນ , ຄຸນຄ່າຂອງຄົນເຮົາແມ່ນການສ້າງຄວາມດີ ການສ້າງປະໂຫຍດແກ່ສັງຄົມນັ້ນຕ່າງຫາກ. ດັ່ງນັ້ນ ໃນທັດສະນະສ່ວນຕົວຂອງຂ້າພະເຈົ້າການເຮັດວຽກນຳລັດ,ນຳເອກະຊົນຫລືທຸລະກິດສ່ວນຕົວກໍ່ລ້ວນແຕ່ແມ່ນປະກອບສ່ວນແກ່ປະເທດຊາດ ແລະ ສັງຄົມໄດ້ ສະມາຄົມກໍແມ່ນ ນຶ່ງໃນຮູບການທີ່ຈະເຕົ້າໂຮມເອົາຄວາມສາມັກຄີຂອງທຸກຄົນ, ກາຍເປັນຂົວຕໍ່ທີ່ປະກອບດ້ວຍໄມ້ຫຼາຍລຳຊຶ່ງຈະເປັນຂົວຕໍ່ທີ່ດີຂອງການພົວພັນຮ່ວມມືລາວ-ຍີ່ປຸ່ນໄດ້.

ດຣ.ພອນແກ້ວ ຈັນທະມາລີ

JAOL


ສະມາຄົມອະດີດນັກສຶກສາລາວ
ຈາກຍີ່ປຸ່ນ
ラオス元日本留学生会
Japan Alumni Of Lao

Address:
Lao Japan center
National University Of Laos
Dongdok campus
P.O.Box 7322
Vientiane, Lao P.D.R

Phone: (856-21)720156-8
Fax: (856-21)-770267
E-mail: jaol99@gmail.com




## ນັ່ງລົມສົນທະນາ

ໃນນີ້ນີ້ຂ້າພະເຈົ້າຂໍນຳພາບັນດາທ່ານທັນຫລັງໄປນັ່ງລົມສົນທະນາເລື່ອງໃນອະດີດເມື່ອສະໄໝທີ່ຍັງເປັນນັກສຶກສາຢູ່ປະເທດຍີ່ປຸ່ນ. ພາຍຫລັງທີ່ຮຽນຈົບມາຈາກປະເທດຍີ່ປຸ່ນ ຂ້າພະເຈົ້າໄດ້ມີໂອກາດພົບປະ ແລະ ສົນທະນາກັບບັນດານັກສຶກສາທຶນ Monbusho, JICA, JDS, AYF ແລະ ບັນດາທຶນອື່ນໆ ທີ່ຮຽນຈົບຈາກປະເທດຍີ່ປຸ່ນ.ຫລາຍໆທ່ານໄດ້ຈົ່ມເປັນສຽງດຽວກັນວ່າພວກເຮົາບໍ່ມີໂອກາດໄດ້ພົບປະກັນເປັນປະຈຳຄືສະໄໝທີ່ຮຽນຢູ່ປະເທດຍີ່ປຸ່ນຊຶ່ງໃນປີນທ້າຍອາທິດໄດ້ຫລິ້ນກິລາຮ່ວມກັນຮັບປະທານອາຫານນຳກັນສົນທະນາແລກປ່ຽນໃນການຮ່ຳຮຽນ ແລະວິທີການດຳລົງຊີວິດໃຫ້ການຊ່ວຍເຫລືອເຊິ່ງກັນ ແລະ ກັນ,ຮ່ວມກັນຈັດກິດຈະກຳຕ່າງໆ ຢ່າງເປັນປະຈຳໂດຍໃນການພົບປະສົນທະນາກັນນັ້ນມີບາງຄົນກໍ່ຄິດຮອດລູກຮອດເມຍຢູ່ບ້ານ,ບາງຄົນຄິດຮອດພໍ່ແມ່ຢູ່ທາງບ້ານ,ມີບັນຫາການຮ່ຳຮຽນ ຫລື ການດຳລົງຊີວິດຢູ່ຍີ່ປຸ່ນ, ຄິດຮອດຮູ້ຮອດແຟນນັ້ງເຝົ້າຈົດຄອນພໍເຕີມກັນຈົນຮອດແຈ້ງ. ຄືວ່າມີຄວາມຜູກພັນກັນຈົນຮູ້ເຖິງນ້ຳໃສໃຈດຳ ແລະ ມີຊື່ພິເສດທີ່ຮູ້ຈັກກັນພາຍໃນໝູ່ຄະນະ,ເຖິງວ່າສະຖານທີ່ພັກຈະຫ່າງໄກຈາກກັນແຕ່ທຸກໆ ຄົນກໍ່ມາພົບປະກັນເປັນປະຈຳ.

ບັນດາທ່ານໄດ້ຕັ້ງບັນຫາຂຶ້ນວ່າພາຍຫລັງທີ່ຮຽນຈົບມາ ແລະ ມາເຮັດວຽກຢູ່ບ້ານເຮົານີ້ຫລາຍຄົນທີ່ເຄີຍຮຽນຢູ່ມະຫາວິທະຍາໄລດຽວກັນ,ຢູ່ທີ່ພັກຮ່ວມກັນບໍ່ຄ່ອຍໄດ້ມີການໄດ້ພົບກັນເຖິງແມ່ນວ່າສະຖານທີ່ເຮັດວຽກຫ່າງໄກກັນບໍ່ຮອດ 1 ກິໂລແມັດ ຫລື ຢູ່ຮ່ວມຕຶກເຮັດວຽກດຽວກັນກໍ່ບໍ່ຄ່ອຍໄດ້ພົບກັນສອນຫລວງຫລາຍກໍ່ແບບບັງເອີນ, ຫລາຍທ່ານໄດ້ໃຫ້ເຫດຜົນວ່າ ຕ່າງຄົນຕ່າງກໍ່ຫຍຸ້ງວຽກ ມີກິດຈະກຳສັງຄົມຫລາຍກິດຈະກຳ(ສາຍຄອບຄົວ, ໝູ່ເພື່ອນບ່ອນເຮັດວຽກທີ່ສັງກັດ) ພ້ອມນັ້ນກໍ່ຍັງຂາດຈຸດໃຈກາງໃນການເຕົ້າໂຮມ ແລະ ຂາດກິດຈະກຳທີ່ເໝາະສົມໃນການພົບປະສັງສັນກັນ. ຫລາຍຄົນຄິດຮອດຄວາມຫ່ວງໃຍຜູກພັນການຊ່ວຍເຫລືອເຊິ່ງກັນ ແລະ ກັນແລະບັນຍາກາດເມື່ອສະໄໝທີ່ຍັງຮຽນຢູ່ທີ່ປະເທດຍີ່ປຸ່ນ ແລະ ຢາກມີໂອກາດໄດ້ສຳພັດກັບມັນອີກ ຄືຄັ້ງທີ່ຮຽນຢູ່ທີ່ປະເທດຍີ່ປຸ່ນ.

ສະບັບການນັ່ງລົມສົນທະນາໃນ NEWSLETTERສະບັບນີ້ຈຶ່ງຝາກມາຍັງບັນດາສະມາຊິກຂອງສະມາຄົມແລະຄະນະສະມາຄົມຈົ່ງຊ່ວຍກັນປະກອບສ່ວນ ແລະມີສ່ວນຮ່ວມເຂົ້າໃນການສ້າງ ແລະດຳເນີນກິດຈະກຳເພື່ອໃຫ້ບັນລຸຄວາມຕ້ອງການຂອງບັນດາ ທ່ານ ທີ່ຕ້ອງການພົບປະກັນ,ສຳພັດກັບບັນຍາກາດ ແລະ ຫວນຄືນເຖິງອະດີດເມື່ອຄັ້ງຍັງສຶກສາຢູ່ປະເທດຍີ່ປຸ່ນ.

ຈັນຊະນະ ສີຈັນທອງທິບ